**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 1ສິງຫາ 2010 (08-01-2010)**

---

**<u>ນັບຖືຄວາມບໍຣິສຸດຂອງພຣະເຈົ້າ</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: ( 2 ຊາມູເອນ 6:1-15, 17 )

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ ຈະຊ່ອຍໜູນໃຈທ່ານໃຫ້ນັບຖືຄວາມບໍຣິສຸດຂອງພຣະເຈົ້າ ດ້ວຍການເຊື່ອຟັງ

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ບົດຮຽນນີ້ ເວົ້າກ່ຽວກັບການນັບຖືຄວາມບໍຣິສຸດຂອງພຣະເຈົ້າ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ເວລານີ້ ສັງຄົມ ແລະທຳນຽມຂອງພວກເຮົາ ບໍ່ຄ່ອຍຢຳເກງ ແລະນັບຖືຄວາມບໍຣິສຸດຂອງພຣະເຈົ້າ. ແມ່ນແຕ່ໃນໂບດ ເວລາເຂົ້ານະມັສການ ກໍເຫັນວ່າຄົນຜູ້ທີ່ເຂົ້າຮ່ວມນັ້ນ ບໍ່ມີຄວາມຢຳເກງ ມີພຽງແຕ່ເຮັດພໍເປັນພິທີ ບໍ່ໃຫ້ກຽດ ແລະບໍ່ນັບຖືເທົ່ານັ້ນ, ພວກເຮົາຄວນນຈຳເອົາໄວ້ວ່າ ການຢຳເກງພຣະເຈົ້າອັນແທ້ຈິງນັ້ນຄື ຟັງຄວາມ ແລະປະຕິບັດຕາມຂໍ້ຄຳສັ່ງສອນທຸດຢ່າງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ເດືອນນີ້, ພວກເຮົາຈະສືບຕໍ່ສຶກສາເຣື່ອງຊີວິດຂອງດາວິດ. ລາວບໍ່ໄດ້ເປັນຜູ້ນຳທີ່ດີເລີດທຸກຢ່າງ (ເພີເຟັກ) ແຕ່ລາວເປັນຜູ້ທີ່ປະສົບກັບຄວາມສຳເຣັດ.
- ຕາມມາຕະຖານການທົດສອບໃນຊີວິດຂອງກະສັດດາວິດ, ພວກເຮົາສາມາດຮຽນວ່າແມ່ນຫຍັງທີ່ພຣະເຈົ້າໄດ້ຊົງກະທຳ ທີ່ເປັນສິ່ງປະກອບສຳຄັນ ໃນຄວາມສຳເຣັດ.
- ນຳພານັກຮຽນໃຫ້ເອົາໃຈໃສ່ໃນຫົວຂໍ້ທີ່ສຳຄັນໃນບົດຮຽນວັນນີ້ເຊັ່ນຄຳຖາມທີ່ວ່າ: ຄວາມບໍຣິສຸດ ສັກສິດ ນັ້ນຄືອັນໃດ?
- ອ່ານພຣະທັມ ເອຊາຢາ 8:13 ແລ້ວອະທິຖານ, ໂດຍການທູນຂໍຄວາມເຂົ້າໃຈທັງໝົດເຣື່ອງພຣະເຈົ້າຜູ້ຊົງ

ບໍຣິສຸດ ແລະສືບຕໍ່ໃນສິ່ງທີ່ເຂົາເຈົ້າຕ້ອງງການໃຫ້ໂຄຣົບນັບຖືພຣະອົງ.

1. **<u>ໃຫ້ກຽດພຣະຈົ້າໃນວິທີທາງຂອງພຣະອົງ:</u>** (2 ຊາມູເອນ 6:1-5)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 2 ຊາມູເອນ 6:1-5
- ຊາອູນໄດ້ຕາຍ ແລະດາວິດກໍໄດ້ຂຶ້ນເປັນກະສັດຊົນຊາດອິສຣາເອນແທນລາວ. ຖາມວ່າ ຄວາມຈະເຣີນອຸດົມສົມບູນຂອງລາວ (ທັງຈຳນວນຄົນທີ່ເປັນເຫດໃຫ້ຫຍຸ້ງຍາກທັງວົນ ແລະແລະການຈັດໃນການນະມັສການ) ທີ່ສະແດງໃຫ້ເຫັນ ເຣື່ອງການດົນໃຈດາວິດແລະຄວາມສັດຊື່ຂອງລາວຄືແນວໃດ?
- ສິ່ງດົນໃຈຂອງດາວິດຄື ຄວາມສັດຊື່, ຄວາມຈິງໃຈຢ່າງບໍຣິສຸດ. ຄົນສ່ວນຫລາຍໃນສັງຄົມວັທນະທັມຂອງພວກເຮົາເຊື່ອໃນການສັດຊື່ດ້ວຍຄວາມຈິງໃຈຂອງພວກເຮົາ, ພວກເຮົາບໍ່ປາຖນາເຮັດໃນທາງທີ່ຜິດ. ນຳພານັກຮຽນສົນທະນາເຖິງຄວາມ ແຕກຕ່າງຣະຫວ່າງຄວາມຈິງໃຈ ຄວາມສັດຊື່ຂອງການໃຫ້ກຽດພຣະເຈົ້າ ແລະຄວາມລະມັດລະວັງໃນຄວາມສົນໃຈເປັນຫ່ວງວ່າພຣະອົງຈະແນະນຳໃຫ້ຍ້ອງຍໍໃຫ້ກຽດພຣະອົງແນວໃດ.
- ພວກເຮົາຈະສະແດງອອກມາແນວໃດວ່າພວກເຮົາຮັກພຣະເຈົ້າ? ແລະ ພວກເຮົາຄວນນະມັສການພຣະອົງແນວໃດ?
- ອ່ານ 1 ໂຢຮັນ 5:1-3 ແລະ ໂຢຮັນ 4:21-14. ບັນດາຜູ້ທີ່ເຊື່ອ, ພວກເຮົາບໍ່ມີສິດທີ່ຈະຕັດສິນໄດ້ວ່າ ພວກເຮົາພວກເຮົາເປັນຜູ້ທີ່ໃຫ້ກຽດພຣະເຈົ້າ. ພວກເຮົາຕ້ອງເບິ່ງພຣະທັມຂອງພຣະອົງ ແລະການແນະນຳຂອງພຣະອົງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ຊາມູເອນ 6:1-5)

1. ເມື່ອບໍ່ນານມານີ້ ທ່ານໄດ້ຄົ້ນພົບວ່າທ່ານເອງຢູ່ໃນຄວາມສັດຊື່ຕໍ່ພຣະເຈົ້າຢ່າງໃດແດ່?
2. ອີງຕາມພຣະທັມຂອງພຣະເຈົ້າ ທີ່ໃຫ້ພວກເຮົາໄດ້ມີປະສົບການໃນການສະຖິດຢູ່ນຳຂອງພຣະເຈົ້ານັ້ນພວກເຮົາອາດຕຽມຕົວແນວໃດແດ່?
3. ການທີ່ດາວິດໄດ້ເຂົ້າເຖິງພຣະເຈົ້າ ໄດ້ເຮັດໃຫ້ທ່ານມີຄວາມພໍໃຈເໝືອນລາວບໍ່?

2. **<u>ນັບຖືຄວາມບໍຣິສຸດຂອງພຣະເຈົ້າ:</u>** (2 ຊາມູເອນ 6:6-11)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 2 ຊາມູເອນ 6:6-11
- ໃຫ້ຜູ້ນຶ່ງອາສາສມັກ ແບ່ງປັນໃນການຂີ່ມ້າ ຊຶ່ງມີການຂຶ້ນພູ ລົງຄ້ອຍ ເລາະຫ້ວຍລົງຮ່ອງ ວ່າມີຄວາມລຳບາກຍາກຫລາຍພຽງໃດໃນການທີ່ຈະຮັກສາໃຫ້ມ້ານັ້ນໄປຢ່າງນີ້ມນວນລະມຸນລະໄມໄດ້. ອຸດຊາໄດ້ມີຄວາມນ້ອຍໃຈດ້ວຍເຫດທີ່ງົວຕຳສະດຸດນັ້ນບໍ່? ເປັນເພາະເຫດໃດ, ລາວຈຶ່ງໄດ້ຖືກລົງໂທດເຖິງກັບຊີວິດຂອງລາວ?
- ການປະສົບການຈາກການນະມັສການ ໃນທາງທີ່ສັຣເສີນໃຫ້ກຽດແດ່ພຣະເຈົ້ານັ້ນເປັນແນວໃດ?
- ການນະມັສການການທີ່ມີຄວາມຈິດຈໍ່ຢູ່ໃນພຣະເຈົ້າດ້ວຍສຸດຈິດສຸດໃຈ ກັບການນະມັສການພຣະເຈົ້າທີ່ຈິດຈໍ່ໃສ່ໃນການຊ່ອຍເຫລືອນຳພາຈາກພຣະເຈົ້ານັ້ນແມ່ນອັນໃດ້ທີ່ພາໃຫ້ມີປະສົບການກັບພຣະເຈົ້າຫລາຍກວ່າກັນ?
- ຄວາມຮູ້ສຶກຂອງດາວິດຈາກຄວາມຊົມຊື່ນຍິນດີ ເຖິງຄວາມໃຈຮ້າຍ ເຖິງຄວາມຢ້ານກົວ.
- ແຕ່ລະຢ່າງຂອງຄວາມຮູ້ສຶກເຫລົ່ານີ້ ໄດ້ສະແດງໃຫ້ພວກເຮົາເຫັນບາງພາກສ່ວນໃນການນະມັສການຂອງ

ຂອງພວກເຮົາບໍ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ຊາມູເອນ 6:6-11

1. ມີຕົວຢ່າງອື່ນບໍ່ທີ່ໃຫ້ພວກເຮົາເຫັນໃນພຣະຄຳຂອງພຣະເຈົ້າທີ່ເປັນຄຳອະທິບາຍດີໆ ເຖິງຄວາມທ່ຽງທັມ ແລະຄວາມສັດຊື່ຂອງພຣະເຈົ້າ?
2. ໃນໂບດຂອງພວກເຮົາມີຄວາມໂຄຣົບ ໃຫ້ກຽດ ພຣະເຈົ້າຫລາຍປານໃດ?
3. ໃນ 1 ໂກຣິນໂທ 6:19-20 ແລະ 1 ເປໂຕ 1:15-16 ໄດ້ຊ່ອຍເພີ້ມຄວາມເຂົ້າໃຈພຣະທັມຕອນນີ້ແນວໃດ?
4. ທ່ານໄດ້ເອົາພຣະບັນຍັດແຫ່ງຄວາມບໍຣິສຸດຂອງພຣະເຈົ້າ ແລະຄວາມໂຄຣົບຢຳເກງພຣະເຈົ້າ ໃນພາກພັນທະສັນຍາເດີມ ມາສນັບສນູນຄວາມເຊື່ອໃນພາກພັນທະສັນຍາໃໝ່ແນວໃດ?

3 . **<u>ການນະມັສການຢ່າງກະຕືລືລົ້ນແລະຢຳເກງ:</u>** (2 ຊາມູເອນ 26:12-15,17)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 6:12-15,17
- ອະທິບາຍລະຫວ່າງສາມເດືອນທີ່ອຸດຊາຕາຍຜ່ານມາ ແລະພຣະທັມຕອນນີ້.
- ໃນການຊອກສແວງຫາພຣະທັມພຣະເຈົ້າ, ຊອກຫາການຊ່ອຍເຫລືອຈາກຄົນອື່ນໆ, ການສາຣະພາບ, ແລະການອະທິຖານ ດາວິດໄດ້ເຮັດແນວໃດແດ່?
- ໃນເມື່ອພວກເຮົາຮູ້ສຶກວ່າພວກເຮົາໄດ້ລະເມີດຕໍ່ພຣະເຈົ້າຜູ້ສັກສິດແລ້ວພວກເຮົາຄວນເຮັດແນວໃດ?
- ຂໍໃຫ້ກັບຄືນໄປເບິ່ງ ການບັນທຶກໃນ 2 ຊາມູເອນ 6:12-15. ຖາມວ່າ: ການກະທຳຂອງດາວິດທີ່ໄດ້ຈັດຕຽມຫລາຍໆ ຢ່າງ ໃນດ້ານຄວາມໂຄຣົບຢຳເກງໃຫ້ກຽດເຊື່ອຟັງພຣະເຈົ້າຜູ້ບໍຣິສຸດ ໄດ້ສອນທ່ານແນວໃດ?
- ການມີສັມພັນກັບພຣະເຈົ້າຢ່າງຖືກຕ້ອງນັ້ນ ຕ້ອງຈົດຈຳໄວ້ວ່າ ພຣະເຈົ້າເປັນພຣະເຈົ້າອົງທ່ຽງແທ້ ແລະບໍຣິສຸດທີ່ຄວນໃຫ້ກຽດ ແລະໂຄຣົບບູຊາແຕ່ພຽງອົງດຽວ. ອ່ານພຣະທັມ ມັດທາຍ 22:37.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ຊາມູເອນ 6:12-15,17

1. ດາວິດອຸທິດຕົວຖວາຍຖວາຍບູຊາການກະທຳຂອງພຣະເຈົ້າແນວໃດແດ່? ຜົນທີ່ທ່ານໄດ້ຮັບຈາກການອຸທິດຕົນຖວາຍນະມັສການພຣະເຈົ້າແນວໃດແດ່?
2. ພວກເຮົາໄດ້ອຸທິດຖວາຍຫຍັງແດ່ໃນການນະມັສການພຣະເຈົ້າຂອງພວກເຮົາ?
3. ບາງເທື່ອເຣື່ອງນີ້ອາດຈົບລົງແບບອື່ນ ຖ້າດາວິດບໍ່ໄດ້ສາຣະພາບຜິດບາບຕໍ່ການບໍ່ໂຄຣົບ ແລະເຂົ້າເຖິງພຣະເຈົ້າຄັ້ງທີສອງ ທ່ານຄິດວ່າແນວໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ການທຳຕາມພຣະປະສົງຂອງພຣະເຈົ້າໂດຍວິທີທາງຂອງພຣະອົງ ແມ່ນເປົ້າໝາຍຂອງຄຣິສຕຽນ.
- ພຣະເຈົ້າຈະບໍ່ຮັບຄວາມບໍ່ຮູ້ສຶກຂອງພວກເຮົາທີ່ໃຫ້ກຽດພຣະອົງໜ້ອຍໆ.
- ການທຳຕາມພຣະຄຳຂອງພຣະເຈົ້າ ເປັນການເຮັດໃຫ້ມີອາຣົມດີຕໍ່ໃນການນະມັສການພຣະເຈົ້າ.
- ການນະມັສການການພຣະເຈົ້າສົມຄວນໃຫ້ມີຄວາມຊົມຊື່ນຍິນດີ ໃນທຸກໆເທື່ອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH